RECOFTC
THE CENTER FOR
PEOPLE AND FORESTS

# ໂຄງການສ້າງຄວາມອາດສາມາດ ຂັ້ນຮາກຖານ ສຳລັບ ເຣດ+ ໃນອາຊີ

## ປື້ມໂຄງການ



ການປຶກສາຫາລືໃນເວທີສາກົນກ່ຽວກັບ ເຣດ+ (ການຫຼຸດຜ່ອນການປ່ອຍທາດອາຍພິດເຮືອນແກ້ວຈາກການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ, ການຮັກສາປະລິມານຂອງທາດກາກບອນປ່າໄມ້, ການຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ການເພີ້ມພູນປະລິມານຂອງທາດກາກບອນປ່າໄມ້) ໄດ້ມີວັດທະນາການຢ່າງວ່ອງໄວໃນຊຸມປີທີ່ຜ່ານມາ. ເຖິງຢ່າງໃດກໍ່ຕາມ, ການປຶກສາຫາລືກ່ຽວກັບການປ່ຽນແປງດິນຟ້າອາກາດ ແລະ ເຣດ+ ສ່ວນຫລາຍຈຳກັດຢູ່ສະເພາະແຕ່ພາຍໃນບັນດາຜູ້ວາງນະໂຍບາຍ, ອົງການຈັດຕັ້ງສາກົນ ແລະ ນັກວິຊາການ ໂດຍມີການປະກອບສ່ວນພຽງເລັກໜ້ອຍ ຫຼື ບໍ່ມີເລີຍຈາກພາກສ່ວນທີ່ກ່ຽວຂ້ອງຕ່າງໆ ຢູ່ຂັ້ນຮາກຖານ.



ເນື່ອງຈາກວ່າ ຂໍ້ມູນຂ່າວສານກ່ຽວກັບການປ່ຽນແປງດິນຟ້າອາກາດ ແລະ ເຣດ+ ມີຈຳກັດ ແລະ ຜູ້ປະຕິບັດ ເຣດ+ ຢູ່ພາກສະໜາມ ຍັງຂາດໂອກາດເພື່ອແລກປ່ຽນປະສົບການຂອງພວກເຂົາເຈົ້າ, ຈຳນວນຄູຝຶກທີ່ມີຄວາມຮູ້ຄວາມສາມາດ  ແລະ ມີຄວາມເຂົ້າໃຈດີ ກໍ່ມີໜ້ອຍ. ດັ່ງນັ້ນ, ຍັງມີຫລາຍ ທີ່ບໍ່ທັນເຂົ້າໃຈກ່ຽວກັບ ເຣດ+ ຢູ່ໃນລະດັບແຂວງ,ເມືອງ ແລະ ທ້ອງຖິ່ນ. ເພື່ອມີສ່ວນຮ່ວມທັງໝົດໃນການວາງແຜນ ແລະ ປະຕິບັດ ເຣດ+, ພາກສ່ວນທີ່ກ່ຽວຂ້ອງຢູ່ຂັ້ນຮາກຖານ ຕ້ອງມີຂໍ້ມູນກ່ຽວກັບຂະບວນການ ເຣດ+ ຢ່າງຄົບຖ້ວນ, ຈະແຈ້ງ ແລະ ສອດຄ່ອງກັບວັດທະນະທຳ. ນອກຈາກນັ້ນ, ຄວາມຕ້ອງການທາງດ້ານຄວາມສາມາດຂອງພາກສ່ວນທີ່ກ່ຽວຂ້ອງຢູ່ຂັ້ນຮາກຖານ ຄວນໄດ້ຮັບການແກ້ໄຂ ເພື່ອເຮັດໃຫ້ພວກເຂົາເຈົ້າ ສາມາດສື່ສານສິ່ງທີ່ກ່ຽວຂ້ອງ ແລະ ຄວາມປາດຖະໜາຂອງພວກເຂົາເຈົ້າ ກ່ຽວກັບການປ່ຽນແປງດິນຟ້າອາກາດ ແລະ ເຣດ+ ຕໍ່ບັນດາຜູ້ວາງນະໂຍບາຍໄດ້.

ນັບຕັ້ງແຕ່ປີ 2009, ສູນຝຶກ RECOFTC ໄດ້ຈັດຕັ້ງປະຕິບັດໂຄງການລະດັບພາກພື້ນ ກ່ຽວກັບການສ້າງຄວາມອາດສາມາດ ໃຫ້ແກ່ຂັ້ນຮາກຖານ ສຳລັບ ເຣດ+, ຜ່ານການສະໜັບສະໜູນຈາກອົງການ Norad, ໂດຍມີຈຸດປະສົງເພື່ອສົ່ງເສີມການເຂົ້າຮ່ວມພົວພັນ ຂອງພາກສ່ວນທີ່ກ່ຽວຂ້ອງຕ່າງໆ ຢູ່ຮາກຖານ ໃນການສົນທະນາກ່ຽວກັບການປ່ຽນແປງດິນຟ້າອາກາດ ແລະ ເຣດ+ ຢູ່ໃນພາກພື້ນອາຊີ-ປາຊີຟິກ ໃຫ້ມີປະສິດທິພາບຢ່າງແທ້ຈິງ.

ໃນຊ່ວງສອງໄລຍະໂຄງການທີ່ຜ່ານມາ (ເດືອນສິງຫາ 2009-ເດືອນກໍລະກົດ 2010 ແລະ ເດືອນສິງຫາ 2010- ເດືອນກໍລະກົດ 2013),ໂຄງການໄດ້ສົ່ງເສີມ ຄວາມຮູ້ ແລະພັດທະນາທັກສະຂອງຫຼາຍພາກສ່ວນທີ່ກ່ຽວຂ້ອງ ໂດຍຜ່ານແຜນງານພັດທະນາຂີດຄວາມສາມາດຕ່າງໆໃນສີ່ປະເທດຂອງໂຄງການ ເຊັ່ນ ອິນໂດເນເຊຍ, ສປປ ລາວ, ເນປານ ແລະ ຫວຽດນາມ. ປັດຈຸບັນ, ແມ່ນຢູ່ໃນໄລຍະທີ່ສາມຂອງການຈັດຕັ້ງປະຕິບັດໂຄງການ, ເຊິ່ງເລີ້ມແຕ່ເດືອນມັງກອນ 2013 ຈົນເຖິງເດືອນທັນວາ 2015. ສຳລັບໄລຍະທີສາມ ໄດ້ເພີ້ມປະເທດ ມຽນມາ ເຂົ້າເປັນປະເທດເປົ້າໝາຍທີ່ຫ້າຂອງໂຄງການ




ໃນໄລຍະທີສາມຂອງໂຄງການ,ພື້ນທີ່ຂອງໂຄງການໃນ ສ.ປ.ປ.ລາວ ຈະມີຢູ່ໃນແຂວງຫຼວງພະບາງ, ຫົວພັນ ແລະ ສາລະວັນ

### ໃຜແມ່ນພາກສ່ວນທີ່ກ່ຽວຂ້ອງຢູ່ຂັ້ນຮາກຖານ?

- ຄົວເຮືອນທີ່ເພິ່ງພາອາໄສປ່າໄມ້ໃນການດໍາລົງຊີວິດ
- ຊຸມຊົນທ້ອງຖິ່ນ ແລະ ຊົນເຜົ່າພື້ນເມືອງ
- ແມ່ຍິງ, ຊາວໜຸ່ມ, ເດັກ ແລະ ຊົນເຜົ່າສ່ວນໜ້ອຍອື່ນໆ
- ອົງການຈັດຕັ້ງຊຸມຊົນ
- ກຸ່ມນໍາໃຊ້ປ່າໄມ້ຊຸມຊົນ
- ບັນດາຜູ້ຄຸ້ມຄອງປ່າໄມ້ຢູ່ທ້ອງຖິ່ນ
- ພະນັກງານລັດ ແລະ ເຈົ້າໜ້າທີ່ປ່າໄມ້
- ອົງການຈັດຕັ້ງບໍ່ສັງກັດລັດ, ກຸ່ມສັງຄົມພົນລະເມືອງ ແລະ ນັກຂ່າວທ້ອງຖິ່ນ

## ຮູບແບບການຈັດຕັ້ງປະຕິບັດຂອງໂຄງການ

ອີງໃສ່ຊ່ອງຫວ່າງທາງດ້ານຄວາມຮູ້ທີ່ໄດ້ກໍານົດ ໂດຍການປະເມີນຄວາມຕ້ອງການ, ໂຄງການ ໄດ້ພັດທະນາຫຼັກສູດຝຶກອົບຮົມກ່ຽວກັບການປ່ຽນແປງດິນຟ້າອາກາດ ແລະ ເຣດ+, ພ້ອມດ້ວຍຄູ່ມື ແລະ ອຸປະກອນສະເພາະດ້ານ, ເຊິ່ງໄດ້ດັດປັບໃຫ້ເຂົ້າກັບສະພາບຂອງທ້ອງຖິ່ນ ແລະ ໄດ້ຜະລິດເປັນພາສາລາວ. ມີກໍລະນີສຶກສາຈາກສະໜາມ ເພື່ອໃຫ້ຂໍ້ມູນເພີ້ມເຕີມກ່ຽວກັບການປະຕິບັດໂຄງການ. ແຜນງານພັດທະນາຂີດຄວາມສາມາດ ແລະ ຝຶກອົບຮົມ ໄດ້ດໍາເນີນຕາມວິທີການປະຕິບັດເປັນແຕ່ລະຂັ້ນ ແຕ່ ລະດັບຊາດ, ແຂວງ, ຈົນເຖິງລະດັບທ້ອງຖິ່ນ. ໄດ້ເອົາໃຈໃສ່ຕິດຕາມກິດຈະກໍາຂອງໂຄງການ ຜ່ານການສໍາຫຼວດ ແລະ ປະເມີນຜົນ ໂດຍສຸມໃສ່ການຈື່ຈໍາ ແລະ ການນໍາໃຊ້ຄວາມຮູ້ຂອງສໍາມະນາກອນ ກໍ່ຄືປະໂຫຍດຂອງອຸປະກອນຝຶກອົບຮົມໃນສະພາບເງື່ອນໄຂທີ່ແຕກຕ່າງກັນ, ທັງກ່ອນ ແລະ ຫຼັງການຝຶກອົບຮົມ. ສຸດທ້າຍ, ອຸປະກອນຝຶກອົບຮົມທີ່ເໝາະສົມ ແລະ ບົດຮຽນ ທີ່ຖອດຖອນໄດ້ ກໍ່ໄດ້ນໍາມາແລກປ່ຽນຮ່ວມກັນ ທັງຫ້າປະເທດຂອງໂຄງການ ເພື່ອເຮັດໃຫ້ມີການຮຽນຮູ້ທາງວັດທະນະທໍາ ແລະ ເຄືອຂ່າຍ ຮ່ວມກັນ.

## ການຮ່ວມງານ

ການຝຶກອົບຮົມ ແລະ ການພັດທະນາຄວາມສາມາດ ກ່ຽວກັບ ເຣດ+ ໃນແຕ່ລະປະເທດ ແມ່ນສົ່ງຜ່ານເຄືອຂ່າຍຂອງຄູ່ຮ່ວມງານ ຊຶ່ງລວມມີ ກົມ ກອງທີ່ກ່ຽວຂ້ອງຂອງລັດຖະບານ, ອົງການທີ່ບໍ່ສັງກັດລັດ, ສະຖາບັນການສຶກສາ, ແລະ ຊຸມຊົນທີ່ໂຄງການຕັ້ງຢູ່. ພວກເຮົາ ຍັງມີສ່ວນພົວພັນກັບວິທະຍຸທ້ອງຖິ່ນ, ໂທລະທັດ, ແລະ ໜັງສືພິມ ເພື່ອປູກຈິດສໍານຶກກ່ຽວກັບ ເຣດ+ ແລະ ການປ່ຽນແປງດິນຟ້າອາກາດ. ພວກເຮົາ ເຮັດວຽກຢ່າງໃກ້ຊິດຮ່ວມກັບ ກຸ່ມວິຊາການ / ຄະນະສະເພາະກິດແຫ່ງຊາດ ໃນແຕ່ລະປະເທດເປົ້າໝາຍຂອງໂຄງການ ເພື່ອໃຫ້ຜົນສໍາເລັດຂອງໂຄງການສອດຄ່ອງກັບນະໂຍບາຍ ແລະ ແຜນການແຫ່ງຊາດ ສໍາລັບ ເຣດ+.



## ຜົນສຳເລັດຂອງໂຄງການ (2009-2013)

ໂຄງການ ໄດ້ພັດທະນາເອກະສານການຝຶກອົບຮົມຕ່າງໆ ຊຶ່ງມີຢູ່ໃນເວບໄຊ໌ຂອງໂຄງການ, ໃນນັ້ນລວມມີ ປຶ້ມຄູ່ມື, ແຜ່ນພັບໂຄສະນາ, ປຶ້ມນ້ອຍ, ໄປສະເຕີ, ໂຄງການວິທະຍຸ, ແລະ ວີດີໂອສັ້ນໆ ເປັນພາສາແຫ່ງຊາດ ຂອງປະເທດເປົ້າໝາຍຂອງໂຄງການ. ໂຄງການ ໄດ້ຈັດຕັ້ງກິດຈະກຳຫລາຍກວ່າ 700 ຄັ້ງ, ເຊັ່ນ ການຝຶກອົບຮົມຄູຝຶກ, ການປູກຈິດສຳນຶກ ການປຶກສາຫາລື ກ່ຽວຂ້ອງກັບ ເຣດ+, ການຮວມຊຸມນຸມ, ແລະ ການສຳມະນາຂອງຜູ້ຊ່ຽວຊານ ໃນລະດັບຊາດ, ແຂວງ ແລະ ຮາກຖານ ຢູ່ໃນ 4 ປະເທດ ຂອງໂຄງການ, ຊຶ່ງບັນລຸໄດ້ ຫລາຍກວ່າ 35,000 ຄົນ, ໃນນັ້ນ ໜຶ່ງສ່ວນສາມ ແມ່ນແມ່ຍິງທີ່ເຂົ້າຮ່ວມ.

### ຈຳນວນຜູ້ເຂົ້າຮ່ວມຝຶກອົບຮົມ ເຣດ+ ໃນສ.ປ.ປ.ລາວ




ສຳລັບການຈັດຕັ້ງປະຕິບັດໂຄງການ ໃນ ສປປ.ລາວ, ຫຼັງຈາກທີ່ໄດ້ສົນທະນາຮ່ວມກັບພາກສ່ວນທີ່ກ່ຽວຂ້ອງແລ້ວ ໂຄງການໄດ້ປະເມີນຄວາມຕ້ອງການ ໃນການສ້າງຄວາມອາດສາມາດລະດັບຊາດ ສຳລັບ ເຣດ+ ໃນປີ 2009-2010. ໂດຍອີງໃສ່ຜົນຂອງການປະເມີນຄວາມຕ້ອງການດັ່ງກ່າວ ໂຄງການ ໄດ້ຈັດຝຶກອົບຮົມຄູຝຶກ ສຳລັບພາກສ່ວນທີ່ກ່ຽວຂ້ອງ ໃນລະດັບຊາດ, ແຂວງ ແລະ ເມືອງ, ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 97 ທ່ານ, ໃນນັ້ນ 20% ແມ່ນແມ່ຍິງ. ໃນປີ 2010-2013 ໂຄງການ ໄດ້ຈັດຝຶກອົບຮົມ ແລະ ການປູກຈິດສຳນຶກ ໃນລະດັບຊາດ, ແຂວງ ແລະ ເມືອງ, ແລະ ລະດັບຮາກຖານ, ເຊິ່ງລວມມີຜູ້ເຂົ້າຮ່ວມທັງໝົດ 5.428 ຄົນ, ໃນນັ້ນ ມີແມ່ຍິງ 1.464 ຄົນ. ນອກຈາກນັ້ນ,ໂຄງການຍັງໄດ້ພັດທະນາອຸປະກອນຝຶກອົບຮົມຕ່າງໆ ເປັນພາສາລາວ, ລວມມີ ຄູ່ມືຝຶກອົບຮົມ, ປຶ້ມໂຄງການ, ປົດສະເຕີ, ແລະ ອື່ນໆ.

### ລາຍການຜະລິດຕະພັນ ຈາກການພັດທະນາຂີດຄວາມສາມາດ ແລະ ການຝຶກອົບຮົມ

1. ຄູ່ມືຝຶກອົບຮົມ ເຣດ+ ເປັນພາສາອັງກິດ ແລະ ພາສາລາວ.
2. ປຶ້ມແນະນຳກ່ຽວກັບຄວາມເຫັນດີເຫັນພ້ອມຢ່າງເປັນອິດສະຫຼະໂດຍໄດ້ຮັບຮູ້ລ່ວງໜ້າ ເປັນພາສາອັງກິດ ແລະ ພາສາລາວ
3. ຄູ່ມືຝຶກອົບຮົມກ່ຽວກັບຄວາມເຫັນດີເຫັນພ້ອມຢ່າງເປັນອິດສະຫຼະໂດຍໄດ້ຮັບຮູ້ລ່ວງໜ້າເພື່ອນຳເອົາໄປປະຕິບັດຕົວຈິງ ໃນ ເຣດ+ ເປັນພາສາອັງກິດ.
4. ຄູ່ມືຖາມ-ຕອບກ່ຽວກັບການປ່ຽນແປງດິນຟ້າອາກາດ, ປ່າໄມ້ ແລະ ທ່ານ ເປັນພາສາອັງກິດ ແລະ ພາສາລາວ.
5. ບົດບາດຍິງ-ຊາຍ ໃນ ເຣດ+: ຄູ່ມືສຳລັບຜູ້ອຳນວຍຄວາມສະດວກຂັ້ນຮາກຖານ ເປັນພາສາອັງກິດ ແລະ ພາສາລາວ
6. ປົດສະເຕີການປ່ຽນແປງດິນຟ້າອາກາດ ແລະ ເຣດ+ ເພື່ອການປູກຈິດສຳນຶກ ເປັນພາສາລາວ.
7. ປຶ້ມນິຍາມຄຳສັບ ເຣດ+ ເປັນພາສາລາວ.
8. ບົດວິເຄາະກ່ຽວກັບທັດສະນະຂອງຊ່ຽວຊານຕໍ່ການປ່ຽນແປງດິນຟ້າອາກາດ ແລະ ປ່າໄມ້ ຫຼັງຈາກກອງປະຊຸມ COP 17 ເປັນພາສາລາວ.
9. ບົດວິເຄາະອື່ນໆ ແລະ ເອກະສານຂອງການຖອດຖອນບົດຮຽນຈຳນວນໜຶ່ງ ເປັນພາສາອັງກິດ.





## ທິດທາງຕໍ່ໜ້າ

ການປະຕິບັດໂຄງການໃນໄລຍະທີສາມ ໄດ້ສ້າງຂຶ້ນບົນພື້ນຖານທີ່ເຂັ້ມແຂງ ຈາກປະສົບການທີ່ໄດ້ ຂອງສອງໄລຍະທີ່ຜ່ານມາຂອງໂຄງການ. ການປະເມີນຜົນສຸດທ້າຍ (ETR) ຂອງໄລຍະທີ່ສອງຂອງໂຄງການ ໄດ້ໃຫ້ຄຳແນະນຳເພື່ອປັບປຸງຄວາມສອດຄ່ອງ, ປະສິດທິພາບ ແລະ ປະສິດທິຜົນຂອງໂຄງການໃນໄລຍະສາມ. ຮູບແບບການຝຶກອົບຮົມ ແລະ ພັດທະນາຂີດຄວາມສາມາດ ກ່ຽວກັບ ເຣດ+ ແນໃສ່ເພື່ອພັດທະນາການຄຸ້ມຄອງປ່າໄມ້ແບບຍືນຍົງ; ສ້າງຄວາມອາດສາມາດໃຫ້ແກ່ຂັ້ນຮາກຖານ ໃນການຄຸ້ມກັນທາງສັງຄົມ ກ່ຽວກັບເຣດ+ ໃຫ້ເຂັ້ມແຂງ; ການອໍານວຍຄວາມສະດວກໃນການປຶກສາຫາລື ຢູ່ລະດັບທ້ອງຖິ່ນ ລະຫວ່າງ ບັນດາຜູ້ວາງນະໂຍບາຍ ແລະ ພາກສ່ວນທີ່ກ່ຽວຂ້ອງຢູ່ຂັ້ນຮາກຖານ; ການສ້າງລະບົບການຕໍານິສິ່ງຂ່າວ ແຕ່ຂັ້ນຮາກຖານຂຶ້ນຫາລະດັບນະໂຍບາຍ; ແລະ ການສ້າງເຄືອຂ່າຍ ແລະ ການແລກປ່ຽນຄວາມຮູ້ ລະຫວ່າງຄູ່ຮ່ວມປະຕິບັດໂຄງການພາຍໃນປະເທດ ກໍ່ເຫັນວ່າສໍາຄັນ ເພີ້ມໃສ່ຂອບວຽກຂອງໂຄງການໃນໄລຍະສາມ. ຄວາມຄືບໜ້າ ແລະ ຜົນສໍາເລັດຂອງໂຄງການ ຈະໄດ້ເອົາໃຈໃສ່ຕິດຕາມ ໃນຂັ້ນຕອນຕ່າງໆຂອງການປະຕິບັດໂຄງການ.

## ອົງການຈັດຕັ້ງຄູ່ຮ່ວມງານຂອງໂຄງການ

ຄູ່ຮ່ວມງານ:

1. ກົມປ່າໄມ້, ກະຊວງກະສິກໍາ ແລະ ປ່າໄມ້ - ຊີ້ນໍາການຈັດຕັ້ງປະຕິບັດໂຄງການ, ຮ່ວມໃນການຝຶກອົບຮົມຄູຝຶກ ແລະ ຈັດຝຶກອົບຮົມຂັ້ນແຂວງ
2. ຄະນະປ່າໄມ້, ມະຫາວິທະຍາໄລແຫ່ງຊາດ, ກະຊວງສຶກສາທິການ ແລະ ກິລາ - ປະກອບສ່ວນໃນການຝຶກອົບຮົມຄູຝຶກໃນລະດັບຊາດ ແລະ ລະດັບທ້ອງຖິ່ນ, ຜະລິດຄູ່ມື ແລະ ເອກະສານການຝຶກອົບຮົມ
3. ສູນຝຶກອົບຮົມເພື່ອການພັດທະນາແບບມີສ່ວນຮ່ວມ - ປະກອບສ່ວນໃນການຝຶກອົບຮົມຄູຝຶກຊາວໜຸ່ມ ແລະ ປູກຈິດສໍານຶກໃຫ້ຊາວໜຸ່ມໃນລະດັບທ້ອງຖິ່ນ ເພື່ອເຜີຍແຜ່ຄວາມຮູ້ ໃຫ້ແກ່ຊາວບ້ານ
4. ອົງການ ບ້ານຈຸດສຸມສາກົນ - ປະກອບສ່ວນໃນການປູກຈິດສໍານຶກໃຫ້ແກ່ຊາວບ້ານ

ຄູ່ຮ່ວມງານ:

1. ສະມາຄົມຊີວະນາໆພັນລາວ (LBA)
2. ໂຄງການ CliPAD
3. ແຜນງານ LEAF ໃນ ສປປ.ລາວ
4. ໂຄງການ PAREDD
5. ໂຄງການ SUFORD

ຮຽນຮູ້ເພີ້ມເຕີມກ່ຽວກັບໂຄງການ ແລະ ດາວໂຫຼດວາລະສານ ແລະ ປື້ມພິມ ທີ່ເວັບໄຊ http://www.recoftc.org/site/resources/Grassroots-Capacity-Building-for-REDD-/
ຫຼື ຕິດຕໍ່ພວກເຮົາໄດ້ທາງ email: REDDgrassroots@recoftc.org




All photos courtesy of RECOFTC

RECOFTC

THE CENTER FOR PEOPLE AND FORESTS

ພາລະກິດຂອງ RECOFTC ແມ່ນເພື່ອເພີ້ມທະວີຂີດຄວາມສາມາດ ເພື່ອຮັບປະກັນສິດທິໃຫ້ມີຄວາມໝັ້ນຄົງກວ່າເກົ່າ, ປັບປຸງການຈັດຕັ້ງຄຸ້ມຄອງໃຫ້ດີຂື້ນ ແລະ ປະຊາຊົນທ້ອງຖິ່ນໄດ້ຮັບຜົນປະໂຫຍດເທົ່າທຽມກັນ ໃນການຄຸ້ມຄອງນຳໃຊ້ພື້ນທີ່ປ່າໄມ້ ຢູ່ພາກພື້ນອາຊີ-ປາຊີຟິກ ໃຫ້ມີຄວາມຍືນຍົງ.

RECOFTC ຖືເປັນສະຖານທີ່ແຫ່ງດຽວ ແລະ ມີຄວາມສຳຄັນໃນຂົງເຂດວຽກງານປ່າໄມ້. RECOFTC ເປັນອົງການຈັດຕັ້ງສາກົນທີ່ບໍ່ຫວັງຜົນກຳໄລອົງການດຽວທີ່ເຮັດໜ້າທີ່ສະເພາະໃນການພັດທະນາຂີດຄວາມສາມາດໃຫ້ປ່າໄມ້ຊຸມຊົນ. RECOFTC ມີສ່ວນພົວພັນກັບເຄືອຂ່າຍທາງຍຸດທະສາດ ແລະ ຄູ່ຮ່ວມງານທີ່ມີປະສິດທິພາບກັບລັດຖະບານ, ອົງການຈັດຕັ້ງທີ່ບໍ່ສັງກັດລັດ, ອົງການຈັດຕັ້ງທາງສັງຄົມ, ພາກເອກະຊົນ, ປະຊາຊົນທ້ອງຖິ່ນ ແລະ ສະຖາບັນຄົ້ນຄ້ວາ ແລະ ການສຶກສາໃນທົ່ວພາກພື້ນອາຊີ-ປາຊີຟິກ ແລະ ຂົງເຂດອື່ນໆ. ບົນພື້ນຖານບົດຮຽນ ແລະ ປະສົບການສາກົນມາກ່ວາ 25 ປີ ແລະ ຮູບແບບວິທີການເຄື່ອນໄຫວໃນການພັດທະນາຄວາມອາດສາມາດ – ທີ່ກ່ຽວຂ້ອງກັບການຄົ້ນຄ້ວາ ແລະ ການວິໄຈ, ສະຖານທີ່ບ່ອນສາທິດທົດລອງ ແລະ ຜະລິດຕະພັນດ້ານການຝຶກອົບຮົມ – RECOFTC ສະໜອງວິທີແກ້ໄຂໃໝ່ໃຫ້ປະຊາຊົນ ແລະ ປ່າໄມ້.

RECOFTC – The Center for People and Forests
P.O. Box 1111
Kasetsart Post Office
Bangkok 10903, Thailand
Tel (66-2) 940-5700
Fax (66-2) 561-4880
info@recoftc.org
www.recoftc.org

Printed on recycled paper

Norad